Medi-Cal

# ກົດໝາຍໃໝ່ກ່ຽວກັບ Medi-Cal ແລະຄົນເຂົ້າເມືອງ

ຂໍ້ມູນກ່ຽວກັບ Medi-Cal

ກົດລະບຽບເລີ້ມແຕ່ວັນທີ 1 ເດືອນກໍລະກົດ 2006 ກົດລະບຽບໃໝ່ກຳນົດໃຫ້ປະຊາຊົນສະຫະຣັຖອາເມລິກາ ສະແດງ ເອກະສານຕ່າງໆ ເພື່ອພິສູດວ່າ ເຂົາເຈົ້າແມ່ນພົນລະເມືອງ ເພາະສະນັ້ນເຂົາເຈົ້າຈິ່ງສາມາດຮັບເອົາ Medi-Cal ໄດ້. **ກົດລະບຽບໃໝ່ນີ້ບໍ່ໄດ້ຮຽກຮ້ອງໃຫ້ທ່ານເປັນພົນລະເມືອງເພື່ອທີ່ຈະໄດ້ຮັບ Medi-Cal. ບັນດາຄົນເຂົ້າເມືອງຍັງສາມາດຮັບເອົາແລະຮັກສາເອົາ Medi-Cal ໄວ້ໄດ້.**

ຕ່າງໆ ບໍ່ໄດ້ປ່ຽນແປງເພື່ອບັນດາຄົນເຂົ້າເມືອງ. ຄົນເຂົ້າເມືອງທີ່ອາດບໍ່ມີເອກະສານ ການເຂົ້າເມືອງຍັງສາມາດຮັບເອົາ Medi-Cal ໄດ້ສຳລັບໃນກໍລະນີສຸກເສີນ, ການຖືພາ ຫລືການບໍລິການ ວາງແຜນຄອບຄົວ, ແລະການບໍລິການອື່ນໆ ບາງຢ່າງ. ຄົນເຂົ້າເມືອງທີ່ມີເອກະສານການເຂົ້າເມືອງ ອາດຮັບເອົາ Medi-Cal ສຳລັບການປິ່ນປົວຮັກສາ, ການບໍລິການຮັກສາແຂ້ວແລະສາຍຕາໄດ້. ທັງຜູ້ທີ່ເປັນພົນລະເມືອງແລະຄົນເຂົ້າເມືອງຍັງສາມາດຮັບເອົາ Medi-Cal ໄດ້ຫລັງຈາກວັນທີ 1 ກໍລະກົດ.

**ສິ່ງສຳຄັນທີ່ຄວນຈື່ຈຳ:**

- ທ່ານບໍ່ຈຳເປັນຕ້ອງເປັນພົນລະເມືອງສະຫະຣັຖອາເມລິກາ ເພື່ອຮັບ ຫລືຮັກສາເອົາ Medi-Cal ໄວ້ກໍໄດ້.
- ຖ້າວ່າ ດຽວນີ້ ທ່ານ ຫລືສະມາຊິກໃນຄອບຄົວຂອງທ່ານມີ Medi-Cal, ທ່ານຈະບໍ່ເສັຽ Medi-Cal ຂອງທ່ານ ເນື່ອງຈາກກົດລະບຽບໃໝ່ຄຸ້ມຄອງສຳລັບພົນລະເມືອງອາເມລິກາ.
- ກົດລະບຽບຕ່າງໆ ສຳລັບຄົນເຂົ້າເມືອງບໍ່ໄດ້ປ່ຽນແປງ. ທ່ານຍັງສາມາດຮັບ ຫລືຮັກສາເອົາຜົນປະໂຫຍດ Medi-Cal ອັນເກົ່າຊຶ່ງທ່ານມີຢູ່ດຽວນີ້ໄວ້ໄດ້ ຖ້າຫາກວ່າ ທ່ານຍັງມີເງື່ອນໄຂຖືກຕ້ອງຕາມກົດລະບຽບເກົ່າ ຂອງ Medi-Cal ຄືແຕ່ກ່ອນ.
- ຖ້າວ່າ ດຽວນີ້ ທ່ານມີ Medi-Cal ແລະທ່ານເປັນພົນລະເມືອງສະຫະຣັຖອາເມລິກາ ຫລືເປັນຄົນເຂົ້າເມືອງ, ທ່ານຈະບໍ່ເສັຽ Medi-Cal ໂດຍອັດຕະໂນມັດ ແລະບໍ່ຕ້ອງຮ້ອງຂໍໃໝ່ອີກ ຫລັງຈາກວັນທີ 1 ກໍລະກົດ 2006. ບັນດາພົນລະເມືອງແລະຄົນເຂົ້າເມືອງສາມາດຮັກສາເອົາ Medi-Cal ຂອງເຂົາເຈົ້າໄວ້ໄດ້ ແລະສືບຕໍ່ຮັບ ການບໍລິການປິ່ນປົວແລະການປິ່ນປົວແຂ້ວຄືແຕ່ເກົ່າໄດ້. ພະນັກງານດູແລເລື້ອງສິດທິຂອງທ່ານຈະຕິດຕໍ່ ທ່ານເພື່ອອະທິບາຍວ່າ ທ່ານອາດຕ້ອງໃຫ້ຂໍ້ມູນຫຍັງແດ່ແກ່ Medi-Cal ພາຍໃຕ້ກົດລະບຽບໃໝ່ນີ້.
- ຖ້າວ່າ ທ່ານບໍ່ຮ້ອງຂໍຮັບ Medi-Cal ຫລື ຖ້າວ່າ ທ່ານຕ້ອງການສະເພາະການບໍລິການສຸກເສີນ, ການບໍລິການກ່ອນອອກລູກ, ການວາງແຜນຄອບຄົວ, ການຖືພາ, ການສັກຢາປ້ອງກັນພະຍາດ ຫລື ການບໍລິການ ບາງຢ່າງອື່ນໆ ເທົ່ານັ້ນ, ທ່ານບໍ່ຈຳເປັນຕ້ອງໃຫ້ຂໍ້ມູນດ້ານການເຂົ້າເມືອງຂອງທ່ານ ຫລືສະແດງເອກະສານ ຕ່າງໆ ເພື່ອພິສູດຖານະການເປັນພົນລະເມືອງ ຫລືການເຂົ້າເມືອງຂອງທ່ານ.
- ຈື່ໄວ້ວ່າ, ເດັກນ້ອຍບໍ່ຈຳເປັນຕ້ອງເປັນພົນລະເມືອງເພື່ອຮັບເອົາ Medi-Cal. ພໍ່ແມ່ຂອງເດັກນ້ອຍທີ່ເປັນ ພົນລະເມືອງຄວນລໍຖ້າໃຫ້ພະນັກງານດູແລເລື້ອງສິດທິຂອງເຂົາເຈົ້າຕິດຕໍ່ມາກ່ອນທີ່ເຂົາເຈົ້າຈະສະແດງ ເອກະສານໃດໆ ໃຫ້ແກ່ທາງ Medi-Cal. ຖ້າວ່າ ທ່ານແມ່ນພໍ່ແມ່ທີ່ກຳລັງຮ້ອງຂໍເອົາ Medi-Cal ໃຫ້ລູກຂອງທ່ານ, ທ່ານບໍ່ຈຳເປັນຕ້ອງໃຫ້ຂໍ້ມູນໃດໆ ກ່ຽວກັບຖານະການເປັນພົນລະເມືອງ ຫລືຖານະການເຂົ້າເມືອງ ຂອງໂຕທ່ານເອງ.

ເອກະສານຕ່າງໆໄດ້ຮັບການພັດທະນາໂດຍ

The Health Consumer ALLIANCE

- ຖ້າວ່າ ທ່ານເຈັບເປັນ ແລະຕ້ອງການໄປໂຮງໝໍ ຫລືຄລີນິກ, ກະຣຸນາຂໍຮັບເອົາການຊ່ວຍເຫລືອໃຫ້ໄວເທົ່າທີ່ຈະໄວໄດ້. ໂຮງໝໍ ຫລືຄລີນິກຕ່າງໆ ຈະບໍ່ເປີດເຜີຍຂໍ້ມູນການເຂົ້າເມືອງແກ່ເຈົ້າໜ້າທີ່ກວດຄົນເຂົ້າເມືອງ. ທ່ານຄວນຮູ້ສຶກປອດພັຍໃນການຊອກເອົາການບໍລິການດ້ານການດູແລສຸຂະພາບ.

- ຖ້າວ່າ ໂຮງໝໍ ຫລືຄລີນິກ ບອກທ່ານວ່າ ທ່ານບໍ່ສາມາດເຮັດນັດໝາຍ ຫລືຮັບການປິ່ນປົວໄດ້ ເວັ້ນເສັຽແຕ່ທ່ານແມ່ນພົນລະເມືອງສະຫະຣັຖອາເມລິກາ, ອັນນີ້ແມ່ນບໍ່ຖືກຕ້ອງ. ທ່ານຄວນຂໍເວົ້າກັບບຸກຄົນທີ່ດູແລຢູ່ທີ່ໂຮງໝໍ ຫລືຄລີນິກ ແລະຂໍເອົາການປິ່ນປົວດ້ານການແພດທີ່ທ່ານອາດຕ້ອງການ. ຖ້າວ່າ ທ່ານຕ້ອງການການຊ່ວຍເຫລືອ, ຈົ່ງໂທຣໄປທີ່ເລກໂທຣຂ້າງລຸ່ມນີ້.

- ທ່ານບໍ່ຄວນຖືກຖາມກ່ຽວກັບຖານະການເຂົ້າເມືອງຂອງທ່ານ ເມື່ອທ່ານເຮັດນັດໝາຍ ຫລືຮັບການດູແລທາງການແພດ. ທ່ານອາດຖືກຖາມກ່ຽວກັບຖານະການເຂົ້າເມືອງຂອງທ່ານ ຖ້າວ່າ ທ່ານກຳລັງຮ້ອງຂໍຮັບ Medi-Cal ຫລື Healthy Families. ຂໍ້ມູນນັ້ນຈະຖືກນຳໃຊ້ສະເພາະ ເພື່ອຕັດສິນກ່ຽວກັບການຮ້ອງຂໍຂອງທ່ານ ແລະຈະບໍ່ຖືກນຳໃຊ້ເພື່ອລາຍງານບຸກຄົນໃດນຶ່ງຕໍ່ເຈົ້າໜ້າທີ່ກວດຄົນເຂົ້າເມືອງ. ທ່ານບໍ່ຈຳເປັນຕ້ອງໃຫ້ຂໍ້ມູນກ່ຽວກັບສະມາຊິກໃນຄອບຄົວທີ່ກຳລັງຮ້ອງຂໍຮັບ ຫລືຜູ້ທີ່ບໍ່ຕ້ອງການການດູແລທາງການແພດ. ທ່ານບໍ່ຈຳເປັນຕ້ອງໃຫ້ຂໍ້ມູນປອມເພື່ອຮັບເອົາການດູແລສຸຂະພາບ. ຈົ່ງໂທຣຫາເລກໂທຣຂ້າງລຸ່ມນີ້ເພື່ອຊອກເບິ່ງວ່າ ການບໍລິການສຸຂະພາບອັນໃດທີ່ທ່ານສາມາດຮັບເອົາໄດ້ ອີງຕາມຖານະການເຂົ້າເມືອງຂອງທ່ານ.

- ການນຳໃຊ້ການບໍລິການດ້ານການດູແລສຸຂະພາບ, ລວມເຖິງ Medi-Cal (ນອກເໜືອຈາກການດູແລໃນບ້ານພັກຄົນຊະລາ), ບໍ່ສາມາດກີດກັນທ່ານຈາກການໄດ້ບັດຂຽວ ຫລືການໄດ້ສັນຊາດ ໂດຍການໝາຍວ່າທ່ານ "ເພິ່ງພາການຊ່ວຍເຫລືອຂອງຣັຖບານ". ຖ້າວ່າ ທ່ານມີຂໍ້ສົງໃສໃດໆ ຫລືຂໍ້ກັງວົນໃຈ ກ່ຽວກັບການໃຊ້ບໍລິການດູແລສຸຂະພາບ ແລະຖານະການເຂົ້າເມືອງຂອງທ່ານ, ຈົ່ງໂທຣໄປທີ່ເລກໂທຣຂ້າງລຸ່ມນີ້. ທ່ານຍັງສາມາດ ຊອກຫາຂໍ້ມູນເພີ້ມເຕີມໄດ້ທີ່ www.healthconsumer.org.

- ຖ້າວ່າ ທ່ານຖືກປະຕິເສດ ຫລືເສັຽການຊ່ວຍເຫລືອ Medi-Cal ເນື່ອງຈາກຖານະການເຂົ້າເມືອງ ຫລືການເປັນພົນລະເມືອງຂອງທ່ານ, ທ່ານຄວນຂໍເອົາການພິຈາລະນາຄະດີທັນທີ. ທ່ານສາມາດໂທຣໄປທີ່ **1-(800) 952-5253** ເພື່ອຂໍເອົາການພິຈາລະນາຄະດີ. ທ່ານສາມາດຮັບການຊ່ວຍເຫລືອໄດ້ຈາກ ຫ້ອງການຊ່ວຍເຫລືອທາງກົດໝາຍ ຫລືສູນຊ່ວຍເຫລືອຜູ້ຮັບບໍລິການສຸຂະພາບ (Health Consumer Center). ເລກໂທຣຂອງພວກເຮົາຢູ່ຕອນທ້າຍຂອງເອກະສານນີ້.

**ຈົ່ງໂທຣຫາພວກເຮົາ ຖ້າວ່າ ທ່ານຕ້ອງການການຊ່ວຍເຫລືອ. ພວກເຮົາຢູ່ນີ້ເພື່ອຊ່ວຍເຫລືອທ່ານ!**

**Fresno Health Consumer Center**
**2115 Kern Street, Suite 1, Fresno, CA 93721**
**1-800-675-8001**
**www.healthconsumer.org**